# ໂຮງຮຽນວັນອາທິດ

## ວັນອາທິດ ທີ 28 ເດືອນພຶສຈິກາ 2021 (11-28-2021)

---

### ໝັ້ນໃຈໃນເວລາຖືກການທົດສອບ.

*ເມື່ອໃດທີ່ປະສົບການອັນເໝື່ອຍຍາກລຳບາກມັນຄຸ້ມຄ່າແກ່ຈິດໃຈ?*

**ຈຸດສຳຄັນໃນບົດຮຽນ**: ໄວ້ວາງໃຈພຣະເຈົ້າເຖິງແມ່ນວ່າໃນເວລາທີ່ຄວາມເຊື່ອຂອງທ່ານໄດ້ຖືກການທົດສອບ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ທຸກໆລະດູຮ້ອນໄດ້ມີຫຼາຍຄົນມານອນຢູ່ຫາດຊາຍ Bear Dunes ໃນລັດມີຊີແກນເພື່ອໄປເດີນປ່າ. ທຸກໆບາດກ້າວທີ່ກ້າວໄປຂ້າງໜ້າຂອງ Dunes ນັ້ນສູງຊັນ ໃນຕົວຈິງແລ້ວເບິ່ງຄືວ່າເປັນບາດກ້າວຖອຍຫຼັງໃນຂນະທີ່ຕີນຂອງເຮົາຈົມລົງໃນດິນຊາຍ. ການເດີນປ່າທີ່ຍາກໜັກໜ່ວງນີ້ຈະທົດສອບຂີດຈຳກັດຂອງຄວາມວ່ອງໄວທາງດ້ານຮ່າງກາຍຂອງເຮົາ. ແນວໃດກໍຕາມ, ມັນຄຸ້ມຄ່າທຸກຂັ້ນຕອນຂອງຄວາມຍາກລຳບາກເມື່ອເຮົາໄປຮອດຈຸດສູງສຸດແລະເບິ່ງອອກໄປໃນນ້ຳສີຟ້າທີ່ງົດງາມຂອງນ້ຳບຶງມີຊີແກນ.

ພວກເຮົາສາມາດມີຄວາມຮູ້ສຶກວ່າຖືກທົດສອບໃນຂອບເຂດຈຳກັດຂອງພວກເຮົາໃນຫຼາຍວິທີ: ການລ້ຽງດູລູກ, ການດຸ່ນດ່ຽງງົບປະມານການເງິນ, ການຊອກຫາຕຳແໜ່ງໃໝ່ໃນບ່ອນເຮັດວຽກ, ຫຼືການຄືນດີກັນກັບຄວາມບໍ່ຖືກຕ້ອງກັນກັບໝູ່ເພື່ອນ, ຄູ່ສົມລົດ, ພຽງແຕ່ເອີ່ຍເຖິງສອງສາມຢ່າງ. ຊີວິດຈະທົດສອບພວກເຮົາສເມີ; ພວກເຮົາບໍ່ສາມາດໜີມັນ. ນີ້ຍັງລວມໄປເຖິງການທົດສອບຄວາມເຊື່ອຂອງພວກເຮົາທີ່ຈະຍືດເຍື້ອແລະເຂັ້ມແຂງ, ພຣະເຈົ້າຈະອະນຸຍາດໃຫ້ຜູ້ເຊື່ອໄດ້ຖືກທົດສອບ. ພວກເຮົາຈະຮັກສາຄວາມໄວ້ເນື້ອເຊື່ອໃຈແລະຄວາມໝັ້ນໃຈໃນຄວາມເຊື່ອຂອງພວກເຮົາໄດ້ແນວໃດເມື່ອເວລາແຫ່ງການທົດສອບນັ້ນມາເຖິງ? ພວກເຮົາຈະຢູ່ຕໍ່ໄປໄດ້ແນວໃດ ເມື່ອການທົດສອບທາງຝ່າຍຈິດວິນຍານເບິ່ງຄືວ່າ ເກີນຂອບເຂດຂອງພວກເຮົາ? ໃຫ້ພວກເຮົາມາເບິ່ງວ່າອັບຣາຮາມສາມາດຜ່ານການທົດສອບຄວາມເຊື່ອໄດ້ແນວໃດ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**<u>ສຶກສາພຣະຄັມພີ</u>**

### 1. ປະຖົມມະການ 22:1-2

*1. ຄັນຕໍ່ມາ ພຣະເຈົ້າຊົງລອງໃຈອັບຣາຮາມ ພຣະອົງຊົງກ່າວແກ່ເພິ່ນວ່າ, "ອັບຣາຮາມເອີຍ" ເພິ່ນຈຶ່ງທູນຕອບວ່າ, "ໂດຍຂ້ານ້ອຍ." 2. ແລ້ວພຣະອົງຊົງກ່າວວ່າ, "ຈົ່ງເອົາອີຊາກລູກຊາຍສຸດທີ່ຮັກຄົນດຽວຂອງເຈົ້າໄປຍັງແຄວັນໂມຣີຢາ ໃນທີ່ນັ້ນຈົ່ງເຜົາລາວຖວາຍເປັນເຄື່ອງບູຊາແກ່ເຮົາຢູ່ເທິງພູແຫ່ງນຶ່ງ ທີ່ເຮົາຈະບອກແກ່ເຈົ້າ."*

ດ້ວຍຄວາມສັດຊື່, ຄຳສັ່ງຂອງພຣະເຈົ້າຕໍ່ອັບຣາຮາມເບິ່ງຄືວ່າເປັນເຣື່ອງແປກປລາດຢ່າງບໍ່ໜ້າເຊື່ອ-ເຖິງແມ່ນບໍ່ສາມາດຄິດໄດ້. ຄຳສັ່ງອັນຊັດເຈນຂອງພຣະເຈົ້າເຮັດໃຫ້ຫຼາຍຄົນງຶດງໍ້ຢ່າງອັສຈັນ. ນີ້ແມ່ນສິ່ງທີ່ພຣະເຈົ້າໄດ້ສັ່ງໃຫ້ອັບຣາຮາມອາຍຸ ນຶ່ງຮ້ອຍປີໃຫ້ເສັຽສະລະລູກຊາຍທີ່ພຣະຜູ້ເປັນເຈົ້າໄດ້ປະທານໃຫ້ໂດຍພຣະອົງ. ບັດນີ້, ຫຼັງຈາກນັ້ນ, ພຣະເຈົ້າໄດ້ບອກອັບຣາຮາມໃຫ້ຖວາຍລູກເໝືອນຖວາຍແກະເທິງແທ່ນບູຊາ.

ຂ້າພະເຈົ້າໄດ້ພະຍາຍາມທີ່ຈະສວມຮອຍພາບພົດຂອງອັບຣາຮາມ, ສົງສັຍວ່າຂ້າພະເຈົ້າຈະຕອບສນອງຕໍ່ຄຳສັ່ງດັ່ງກ່າວນັ້ນໄດ້ແນວໃດ. ບາງທີອັບຣາຮາມບໍ່ເຄີຍທີ່ຈະລັ່ງເລຫຼືສົງສັຍວ່າລາວໄດ້ຍິນພຣະເຈົ້າຖືກຕ້ອງຫຼືບໍ່, ແຕ່ຂ້າພະເຈົ້າແນ່ໃຈວ່າຢ່າງນ້ອຍຂ້າພະເຈົ້າຈະຮູ້ສຶກມຶນງົງ, ທໍ້ຖອຍໃຈ, ແລະ ບາງທີກໍໃຈຮ້າຍ. ມັນແມ່ນຫັຽງວະ? ພຣະເຈົ້າຢາກໃຫ້ຂ້າພະເຈົ້າເຮັດຫັຽງ?! ພຣະເຈົ້າມັກຈະທົດສອບຄວາມເຊື່ອຂອງເຮົາໂດຍຄຳສັ່ງທີ່ອາດເບິ່ງຄືວ່າຮ້າຍແຮງຕໍ່ເຮົາ.

- ພຣະອົງຢາກໃຫ້ຂ້ານ້ອຍຍົກໂທດໃຫ້ໃຜ?
- ພຣະອົງຢາກໃຫ້ຂ້ານ້ອຍໃຊ້ຂອງປະທານອັນໃດ?
- ພຣະເຈົ້າຢາກໃຫ້ຂ້ານ້ອຍໃຫ້(ຖວາຍ)ຫຼາຍປານໃດ?
- ພຣະເຈົ້າຢາກໃຫ້ຂ້ານ້ອຍຍ້າຍໄປໃສ?

ພຣະເຈົ້າອາດຈະຂໍໃຫ້ພວກເຮົາເຮັດສິ່ງທີ່ເບິ່ງຄືວ່າເກີນຂອບເຂດຂອງພວກເຮົາ. ມັນເປັນເຣື່ອງປົກກະຕິທີ່ຈະຕໍ່ສູ້ກັບຄຳຖາມດັ່ງກ່າວ, ແຕ່ມັນເປັນວິທີທີ່ພວກເຮົາຕອບສນອງຕໍ່ຄຳສັ່ງເຫຼົ່ານັ້ນ.

ຢາໂກໂບຂຽນວ່າ, "ພີ່ນ້ອງທັງຫລາຍຂອງຂ້າພະເຈົ້າເອີຍ, ເມື່ອພວກທ່ານປະສົບການທົດລອງຕ່າງໆ ຈົ່ງຖືວ່າເປັນເຣື່ອງໜ້າຍິນດີທີ່ສຸດ"(ຢາໂກໂບ 1:2). ຈາກທັສນະຄວາມຄິດຂອງມະນຸດ, ຄວາມສຸກອາດເບິ່ງຄືວ່າເປັນຄວາມຮູ້ສຶກສຸດທ້າຍທີ່ພວກເຮົາປະສົບກັບຄວາມຫຍຸ້ງຍາກ, ແຕ່ຢາໂກໂບໄດ້ບອກພວກເຮົາວ່າເປັນຫັຽງພວກເຮົາຈຶ່ງສາມາດມີຄວາມສຸກໄດ້: "ເພາະທ່ານທັງຫຼາຍຮູ້ຢູ່ວ່າການລອງເບິ່ງຄວາມເຊື່ອຂອງພວກທ່ານນັ້ນເຮັດໃຫ້ເກີດຄວາມໝັ້ນໃຈ. ແລະຈົ່ງໃຫ້ຄວາມໝັ້ນໃຈນັ້ນດຳເນີນງານຈົນສຳເລັດ ເພື່ອທ່ານທັງຫຼາຍຈະໄດ້ເປັນຄົນສຳເລັດແລະຄົບຖ້ວນໂດຍບໍ່ຂາດເຂີນສິ່ງໃດ. (ຂໍ້ 3-4). ການທົດສອບເພື່ອເພີ້ມຄວາມໄວ້ໃຈຂອງພວກເຮົາ. ບໍ່ມີການທົດສອບທີ່ຍາກທີ່ພຣະເຈົ້ານຳມາເພື່ອຈຸດປະສົງທີ່ຈະລົດຄຸນຄ່າຂອງພວກເຮົາລົງ, ມີແຕ່ຈະສ້າງຄວາມໄວ້ວາງໃຈເພີ້ມເຕີມໃນພວກເຮົາຫຼາຍຂຶ້ນ.

ຈົ່ງສັງເກດເບິ່ງວ່າ "ພຣະຄຳຂອງພຣະເຈົ້າບໍ່ໄດ້ເວົ້າວ່າພຣະເຈົ້າໄດ້ລໍ້ລວງອັບຣາຮາມ, ພຣະເຈົ້າຈະທົດສອບພວກເຮົາ, ແຕ່ພຣະເຈົ້າບໍ່ເຄີຍລໍ້ລວງພວກເຮົາ. ເພາະວ່າຄວາມຊົ່ວຈະມາລໍ້ລວງພຣະເຈົ້າໃຫ້ຫຼົງບໍ່ໄດ້ ແລະພຣະອົງເອງກໍບໍ່ຊົງລໍ້ລວງໃຫ້ຜູ້ໃດຫຼົງຈັກເທື່ອ" (ຂໍ້ 13). ຊາຕານລໍ້ລວງພວກເຮົາໃຫ້ເຮັດບາບເພື່ອທຳລາຍພວກເຮົາແລະດຶງພວກເຮົາອອກຈາກພຣະເຈົ້າ, ແຕ່ພຣະເຈົ້າໄດ້ທົດສອບພວກເຮົາເພື່ອກໍ່ສ້າງພວກເຮົາຂຶ້ນແລະນຳພວກເຮົາໃຫ້ເຂົ້າໃກ້ຊິດກັບພຣະອົງເອງ. ເມື່ອພວກເຮົາມີຄວາມຮູ້ສຶກຖືກຊັກນຳໃຫ້ເຮັດສິ່ງໃດສິ່ງນຶ່ງ, ພວກເຮົາຄວນຈະຖາມຕົນເອງດ້ວຍສະຕິປັນຍາວ່າ: ນີ້ແມ່ນການທົດສອບຫຼືການລໍ້ລວງ? ຖ້າເຮົາເຮັດສິ່ງນີ້ແລ້ວ, ມັນຈະເຮັດໃຫ້ຄວາມເຊື່ອຂອງພວກເຮົາເຂັ້ມແຂງຂຶ້ນແລະຈະນຳພາພວກເຮົາຫຍັບເຂົ້າມາໃກ້ຊິດກັບພຣະເຈົ້າຫຼືມັນຈະດຶງພວກເຮົາໃຫ້ອອກໄປຫ່າງໄກຈາກພຣະເຈົ້າ? ເໝືອນດັ່ງອັບຣາຮາມ, ຍິ່ງພວກເຮົາເດີນໄປກັບພຣະເຈົ້າດົນນານປານໃດ, ພວກເຮົາກໍສາມາດຈື່ຈຳສຽງຂອງພຣະອົງເຈົ້າໄດ້ຫຼາຍຂຶ້ນ. ການຮຽກຮ້ອງໃຫ້ອັບຣາຮາມໃຫ້ເສັຽສະລະລູກຊາຍຂອງເພິ່ນອາດເບິ່ງຄືວ່າເປັນຄວາມໂຫດຮ້າຍ, ແຕ່ອັບຣາຮາມຮູ້ດີວ່າແມ່ນຜູ້ໃດທີ່ເອີ້ນລາວ.

**2. ປະຖົມມະການ 22:3-10**

*3. ອັບຣາຮາມຈຶ່ງລຸກຂຶ້ນແຕ່ເຊົ້າມືດ ເອົາອານໃສ່ເທິງຫລັງລໍແລ້ວເອົາອີຊາກ ກັບຄົນໃຊ້ສອງຄົນໄປນຳຕົນ ພ້ອມນີ້ເພິ່ນໄດ້ຕຽມເອົາຟືນເພື່ອເຜົາເຄື່ອງບູຊາ ແລ້ວພາກັນອອກເດີນທາງມຸ້ງໜ້າໄປສູ່ບ່ອນທີ່ພຣະເຈົ້າຊົງບອກໄວ້. 4. ເມື່ອເດີນທາງມາໄດ້ສາມມື້ ອັບຣາຮາມກໍແລເຫັນບ່ອນທີ່ພຣະເຈົ້າຊົງບອກນັ້ນແຕ່ໄກ. 5. ດັ່ງນັ້ນເພິ່ນຈຶ່ງເວົ້າກັບຄົນໃຊ້ວ່າ, "ພວກເຈົ້າກັບລໍຈົ່ງຖ້າຂ້ອຍຢູ່ນີ້ ຂ້ອຍກັບລູກຈະພາກັນຂຶ້ນໄປນະມັດສະການພຣະເຈົ້າຢູ່ເທິງພູພຸ້ນ ແລ້ວຈະກັບມາຫາ." 6. ອັບຣາຮາມເອົາຟືນໃຫ້ອີຊາກແບກໄປ ສ່ວນເພິ່ນເອງກໍຖືເອົາໄຟ ແລະມີດ ແລ້ວທັງສອງພໍ່ລູກກໍພາກັນມຸ້ງໜ້າໄປທີ່ນັ້ນ. 7. ເມື່ອກຳລັງເດີນທາງ*

*ໄປນັ້ນ ອີຊາກຈຶ່ງເວົ້າຕໍ່ອັບຣາຮາມວ່າ, "ພໍ່ເອີຍ" ພໍ່ຈຶ່ງຕອບວ່າ, "ແມ່ນຫຍັງລູກ" ອີຊາກຈຶ່ງຖາມຕໍ່ໄປວ່າ, "ຟືນແລະໄຟກໍມີແລ້ວແຕ່ລູກແກະທີ່ຈະເຜົາຖວາຍບູຊານັ້ນຢູ່ໃສ?". 8. ອັບຣາຮາມຕອບວ່າ, "ລູກເອີຍພຣະເຈົ້າຈະຊົງຈັດຫາໃຫ້ເອງ" ສອງພໍ່ລູກກໍພາກັນເດີນທາງຕໍ່ໄປ. 9. ເມື່ອເຂົາໄປຮອດບ່ອນທີ່ພຣະຜູ້ເປັນເຈົ້າໄດ້ຊົງບອກໄວ້ແລ້ວອັບຣາຮາມຈຶ່ງສ້າງແທ່ນບູຊາຂຶ້ນຈັດເອົາຟືນວາງໄວ້ເທິງແທ່ນນັ້ນ ແລ້ວມັດລູກຊາຍຂອງຕົນວາງໄວ້ເທິງກອງຟືນທີ່ແທ່ນບູຊາ. 10. ແລ້ວເພິ່ນຈຶ່ງຈັບມີດຽມຈະຂ້າລູກຊາຍ.*

ບໍ່ວ່າອັບຣາຮາມຈະມີຄຳຖາມອັນໃດກໍຕາມ, ລາວກໍຍັງຕອບສນອງດ້ວຍຄວາມເຊື່ອຟັງທັນທີ. ເຖິງແມ່ນວ່າລາວບໍ່ມີຄຳຕອບທັງໝົດ, ເຖິງແມ່ນວ່າລາວຍັງບໍ່ເຂົ້າໃຈຢ່າງສົມບູນກ່ຽວກັບສິ່ງທີ່ພຣະເຈົ້າກຳລັງກະທຳຢູ່ນັ້ນ, ແລະເຖິງແມ່ນວ່າລາວບໍ່ຮູ້ວ່າເຣື່ອງດັ່ງກ່າວຈະສິ້ນສຸດລົງແນວໃດ, ລາວຍັງດຳເນີນກ້າວເດີນຕໍ່ໄປ. ໂດຍຮູ້ເຖິງຫຼາຍໆສິ່ງທີ່ບໍ່ສົມບູນແບບແລະຄວາມຜິດພາດຂອງຕົນເອງ, ອັບຣາຮາມເລືອກທີ່ຈະໄວ້ວາງໃຈໃນພຣະເຈົ້າ, ໃນເຣື່ອງນີ້ມັນເປັນສິ່ງສຳຄັນສຳລັບພວກເຮົາທີ່ຈະຕອບສນອງທັນທີດ້ວຍຄວາມເຊື່ອເຖິງແມ່ນວ່າໃນເວລາທີ່ພວກເຮົາຍັງບໍ່ມີຄຳຕອບທັງໝົດ. ໃນຈຸດໆໃດກໍຕາມ, ອັບຣາຮາມສາມາດລົ້ມເລີກໄດ້, ບໍ່ວ່າຈະເປັນຕອນທີ່ລາວຕັດໄມ້, ຕອບໂສກເສົ້າທີ່ລໍຂອງລາວ, ເດີນທາງໄປໂມຣີຢາ, ຫຼືການສ້າງແທ່ນບູຊາ, ອັບຣາຮາມສາມາດຢຸດໄດ້ທຸກເວລາ, ຢ່າງໃດກໍຕາມ, ໃນລະຫວ່າງການທົດສອບນີ້. ແນ່ນອນຊາຕານໄດ້ພະຍາຍາມຢ່າງໜັກໃນການປູກຝັງຄວາມສົງສັຍໃນໃຈຂອງອັບຣາຮາມ. "ອັນນີ້ມັນເປັນບ້າ! ເຈົ້າເຮັດບໍ່ໄດ້. ຖ້າພຣະເຈົ້າຊົງຮັກເຈົ້າ, ພຣະອົງຈະບໍ່ສັ່ງໃຫ້ເຈົ້າເຮັດສິ່ງນີ້." ໃນເວລາພວກເຮົາຜ່ານລະດູການທົດສອບ, ພວກເຮົາຕ້ອງຍົກເລີກສິ່ງລົບກວນທີ່ເປັນທາງລົບ. ພວກເຮົາຈຳເປັນຕ້ອງຮັບຮູ້ວ່າພວກເຮົາຈະປະສົບກັບການໂຈມຕີທີ່ແທ້ຈິງຕາມທາງທີ່ຈະລໍ້ລວງພວກເຮົາເຂົ້າໄປໃນການບໍ່ເຊື່ອຟັງ. ສືບຕໍ່ກັບການກົດດັນຕໍ່ໄປໃນການເຊື່ອຟັງພຣະຄຣິດ.

## 3 ປະຖົມມະການ 22:11-14

*11. ແຕ່ທັນໃດນັ້ນ ທູດຂອງພຣະຜູ້ເປັນເຈົ້າເອີ້ນມາແຕ່ສວັນຊັ້ນຟ້າວ່າ, "ອັບຣາຮາມເອີຍ" ເພິ່ນຈຶ່ງທູນຕອບວ່າ, "ໂດຍຂ້ານ້ອຍ." 12. ທູດຂອງພຣະເຈົ້າຈຶ່ງກ່າວຕໍ່ໄປວ່າ, "ຢ່າທຳຮ້າຍຫຼືເຮັດຫຍັງແກ່ເດັກຊາຍຜູ້ນີ້ ບັດນີ້ເຮົາຮູ້ແລ້ວວ່າ ເຈົ້າເຊື່ອຟັງແລະຢຳເກງພຣະເຈົ້າຢູ່ສເມີ. ດ້ວຍວ່າເຈົ້າບໍ່ໄດ້ຫວງລູກຊາຍໂທນຂອງເຈົ້າໄວ້ ແຕ່ໄດ້ຍອມຖວາຍລາວໃຫ້ແກ່ເຮົາ." 13. ອັບຣາຮາມແນມໄປຮອບຕົວເຫັນແກະເຖິກໂຕນຶ່ງຊຶ່ງເຂົາຂອງມັນຄາຢູ່ພຸ່ມໄມ້ ເພິ່ນຈຶ່ງໄປອູ້ມເອົາມັນມາຂ້າຖວາຍແກ່ພຣະຜູ້ເປັນເຈົ້າແທນລູກຊາຍ. 14. ອັບຣາຮາມໃສ່ຊື່ບ່ອນນັ້ນວ່າ, "ພຣະຜູ້ເປັນເຈົ້າຊົງຈັດໃຫ້" ແລະຈົນເຖິງທຸກວັນນີ້ຊາວເມືອງກໍຍັງເວົ້າຕໍ່ກັນມາວ່າ, "ເທິງພູເຂົາຂອງພຣະຜູ້ເປັນເຈົ້າຊົງຈັດໃຫ້."*

ໃນຈຸດໆນີ້, ບໍ່ມີໃຜສາມາດຕັ້ງຄຳຖາມກ່ຽວກັບຄວາມເຊື່ອຂອງອັບຣາຮາມ. ໃນຂນະທີ່ລາວຍົກມີດຂອງລາວຂຶ້ນເໜືອອີຊາກ, ລາວໄດ້ກຽມພ້ອມທີ່ຈະເຮັດໃນສິ່ງທີ່ບໍ່ມີພໍ່ແມ່ຄົນໃດເຄີຍປາຖນາທີ່ຈະເຮັດ. ແຕ່ໃນເວລາທັນທີທັນໃດນັ້ນ, ພຣະເຈົ້າໄດ້ເຂົ້າແຊກແຊງ!

ກ່ອນໜ້ານີ້ອັບຣາຮາມໄດ້ບອກກັບອີຊາກວ່າພຣະເຈົ້າຈະຈັດຫາລູກແກະເພື່ອຖວາຍເຄື່ອງບູຊາ. ພວກເຮົາກໍບໍ່ຮູ້ເໝືອນກັນວ່າໃນເບື້ອງຕົ້ນນັ້ນອັບຣາຮາມເຊື່ອວ່າພຣະເຈົ້າຈະເຂົ້າມາສອດແຊກລູກແກະຈິງໆຫຼືບໍ່, ຫຼືຖ້າຫາກວ່າລາວໃຫ້ເຫດຜົນຕັ້ງແຕ່ຕົ້ນວ່າລູກຊາຍທີ່ພຣະເຈົ້າໄດ້ປະທານໃຫ້ແມ່ນລູກແກະທີ່ພຣະອົງໄດ້ຈັດໃຫ້. ຖ້າພຣະເຈົ້າຊົງປະທານລູກຊາຍຜູ້ນຶ່ງຕາມພຣະສັນຍາໄວ້ໃຫ້ກັບຜູ້ເຖົ້າຜູ້ນຶ່ງ, ເຖິງຢ່າງໃດກໍດີ, ພຣະອົງກໍຈະສາມາດດົນບັນດານລູກຊາຍຂອງລາວໃຫ້ຄືນມາຈາກຕາຍໄດ້

(ເຮັບເຣີ 11:17-19). ທັດສະນະທັງສອງສະແດງໃຫ້ເຫັນຄວາມເຊື່ອທີ່ບໍ່ເປັນໜ້າເຊື່ອ.

ອັບຣາຮາມໄດ້ຮັບປະສົບການກັບຄວາມຈິງໃນມື້ນັ້ນທີ່ພຣະເຈົ້າຈະເປັນຜູ້ຈັດຫາໃຫ້. ແລະໃນເວລານັ້ນອັບຣາຮາມໄດ້ເງີຍໜ້າຂຶ້ນແລະເຫັນແກະໂຕນຶ່ງທີ່ເຂົາຂອງມັນຕິດເກາະຢູ່ໃນພຸ່ມໄມ້. ອັບຣາຮາມຮູ້ທັນທີວ່າແກະໂຕນີ້ເປັນເຄື່ອງຖວາຍບູຊາທີ່ພຣະຜູ້ເປັນເຈົ້າເປັນຜູ້ຈັດຫາໃຫ້ແທນກັບລູກຊາຍຂອງເພິ່ນ. ອັບຣາຮາມໄດ້ຕັ້ງຊື່ບ່ອນນັ້ນຢ່າງເໝາະສົມວ່າ “ພຣະຜູ້ເປັນເຈົ້າຈະຈັດຫາໃຫ້.” ສະຖານທີ່ນີ້ຕໍ່ມາຈະກາຍເປັນສະຖານທີ່ຂອງພຣະວິຫານ, ສະຖານທີ່ຂອງການເສັງສະລະຢ່າງຕໍ່ເນື່ອງທີ່ຊີ້ໃຫ້ເຫັນເຖິງຄວາມຕ້ອງການຂອງປະຊາຊົນສຳລັບການເສັງສະລະທີ່ສົມບູນແບບ: ພຣະເຢຊູ, ການທົດສອບຂອງອັບຣາຮາມແລະຄວາມເຕັມໃຈທີ່ຈະໃຫ້ລູກຊາຍຂອງຕົນອີຊາກຊີ້ໃຫ້ເຫັນເຖິງຄວາມເຕັມໃຈຂອງພຣະເຈົ້າທີ່ຈະເສັງສະລະລູກຊາຍສຸດທີ່ຮັກຂອງພຣະອົງສຳລັບການໄຖ່. ເພື່ອຜົນປະໂຍດຂອງພວກເຮົາ. ແຕ່ຈະບໍ່ເໝືອນກັບອັບຣາຮາມຜູ້ທີ່ຢຸດຈາກການຖວາຍເຄື່ອງບູຊາ, ພຣະເຈົ້າຜູ້ເປັນພຣະບິດາໄດ້ອະນຸຍາດໃຫ້ລູກຊາຍເສັງສະລະ.

ພຣະເຈົ້າຈະຕອບສນອງໃຫ້ສເມີໄປ. ພຣະອົງໃຫ້ສິ່ງທີ່ພວກເຮົາຕ້ອງການໃນເມື່ອພວກເຮົາຕ້ອງການ, ໃນຊ່ວງເວລາທີ່ພຣະເຈົ້າບໍ່ໄດ້ໃຫ້ໃນສິ່ງທີ່ພວກເຮົາຄິດວ່າພວກເຮົາຕ້ອງການ, ຈົ່ງວາງໃຈໃນພຣະອົງ. ຈົ່ງໄວ້ວາງໃຈວ່າພຣະອົງມີບາງສິ່ງທີ່ດີກວ່າທີ່ໄດ້ວາງແຜນໄວ້ໃນເສັ້ນທາງການທົດສອບໃຫ້ພວກເຮົາແລ້ວ.

## ການນຳໃຊ້ໃນຊີວິດ

ພວກເຮົາຕ້ອງໄວ້ວາງໃຈພຣະເຈົ້າເຖິງແມ່ນວ່າໃນເວລາທີ່ຄວາມເຊື່ອຂອງພວກເຮົາໄດ້ຮັບການທົດສອບ. ຈົ່ງເລືອກຂໍ້ນຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

❖ **ຈົ່ງຖາມ.** ພາກສ່ວນໃດຂອງຊີວິດທີ່ພຣະເຈົ້າອາດທົດສອບເຈົ້າກັບສິ່ງທີ່ເບິ່ງຄືວ່າເປັນຄຳສັ່ງທີ່ເປັນເຣື່ອງຕະຫຼົກ? ຂໍໃຫ້ພຣະເຈົ້າຊ່ວຍທ່ານເຍິງສິ່ງທີ່ທ້າທາຍນີ້ຈາກທັດສະນະຂອງພຣະອົງ.

❖ **ຈົ່ງຈົດຈຳ.** ໃຊ້ເວລາຈັກໜ້ອຍນຶ່ງເພື່ອທົບທວນຄືນບັນທຶກການຕິດຕາມຂອງພຣະເຈົ້າໃນຊີວິດຂອງທ່ານ. ຈົດບັນທຶກບ່ອນທີ່ທ່ານໄດ້ເຫັນພຣະເຈົ້າສະແດງໃຫ້ເຫັນພລັງຣິດທານຸພາບຂອງພຣະອົງ. ຈົ່ງຂອບພຣະຄຸນໃນທັນທີແລະຂໍໃຫ້ພຣະເຈົ້າສືບຕໍ່ຊ່ວຍໃນເວລາແຫ່ງການທົດສອບຂອງທ່ານ.

❖ **ຈົ່ງໄປແບ່ງປັນ.** ທ່ານເຄີຍເຫັນການປ້ອງກັນຂອງພຣະເຈົ້າຢູ່ໃສເປັນການປົກປ້ອງຮັກສາຊີວິດຂອງທ່ານ? ໃຊ້ເວລາຈັກໜ້ອຍນຶ່ງເພື່ອຂອບພຣະຄຸນພຣະອົງສຳລັບການປົກປ້ອງນັ້ນ. ຈາກນັ້ນໃຫ້ເປັນພະຍານເຣື່ອງນັ້ນກັບຄົນທີ່ອາດຈະຕ້ອງໄດ້ຍິນໃນເວລາການທົດສອບມາເຖິງ.

ພວກເຮົາຈະບໍ່ເຄີຍຖືກຮຽກຮ້ອງໃຫ້ເຊື່ອວາງໃຈໃນພຣະເຈົ້າໃນການກະທຳອັນສູງສົ່ງຂອງຄວາມເຊື່ອແລະການເຊື່ອຟັງດັ່ງທີ່ອັບຣາຮາມໄດ້ຖືກເອີ້ນໃຫ້ເຮັດ. ແຕ່ພວກເຮົາຈະຖືກຮຽກຮ້ອງໃຫ້ໄວ້ວາງໃຈພຣະອົງໃນເວລາຂອງການທົດລອງ. ເມື່ອສິ່ງນັ້ນເກີດຂຶ້ນ, ຂໍໃຫ້ຈົດຈຳໄວ້ວ່າພຣະເຈົ້າຈະຈັດຫາໃຫ້, ແລະພວກເຮົາສາມາດມີຄວາມໝັ້ນໃຈໃນເວລາຂອງການທົດສອບເຫຼົ່ານັ້ນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**